ຂາຍບໍ່ໄດ້ ແລະ ຂາຍໄດ້ກໍ່ລາຄາຕ່ຳກວ່າຕົ້ນທຶນການຜະລິດ, ດ້ວຍເຫດນັ້ນ ຈຶ່ງໄດ້ມີການຈັດຕັ້ງມາດຕະການ ກັບບັນດາແຂວງທີ່ສົ່ງສັດ ແລະ ຜະລິດຕະພັນສັດ ເຂົ້າມານະຄອນຫລວງວຽງຈັນ.

**ພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງວຽງຈັນ, ອອກແຈ້ງການ:**

1. ມອບໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ເກັບກຳຂໍ້ມູນການລ້ຽງສັດ, ຟາມລ້ຽງສັດແຕ່ລະຊະນິດ ພ້ອມທັງ ດຸ່ນດ່ຽງ ແລະ ວາງແຜນການຜະລິດຄືນໃໝ່ ໂດຍໃຫ້ຄິດໄລ່ຄວາມຕ້ອງການບໍລິໂພກ ຊີ້ນ, ປາ, ໄຂ່ ແລະ ຄວາມສາມາດສະໜອງ ພາຍໃນນະຄອນຫລວງວຽງຈັນ ແລະ ການສົ່ງອອກໄປຕ່າງແຂວງ ໃຫ້ແທດເໝາະ ເປັນແຕ່ລະໄລຍະ;
2. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫລວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຈັດຕັ້ງ ປະຕິບັດການຕິດຕາມ ກວດກາ ການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດເຂົ້າ ແລະ ຂົນສົ່ງຜ່ານນະຄອນ ຫລວງວຽງຈັນ ໃຫ້ເຂົ້າສູ່ກົດໝາຍ ແລະ ລະບຽບຢ່າງເຂັ້ມງວດ;
3. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງທີ່ມີຊາຍແດນຕິດກັບແຂວງອື່ນ ໃຫ້ຄົ້ນຄວ້ານິຕິກຳ ແລະ ສະເໜີຕໍ່ທ່ານ ເຈົ້າເມືອງ ເພື່ອສະເໜີຂໍເປີດຈຸດກວດກາສັດ ແລະ ຜະລິດຕະພັນສັດ ລະຫວ່າງແຂວງຕໍ່ແຂວງ (ຊົ່ວຄາວ) ໃນ 4 ເມືອງ ຄື: ນາຊາຍທອງ, ໄຊທານີ, ສັງທອງ ແລະ ປາກງື່ມ;
4. ຜູ້ປະກອບການທີ່ຈະນຳສັດ ແລະ ຜະລິດຕະພັນສັດ ເຂົ້າມານະຄອນຫລວງວຽງຈັນ ຕ້ອງໄດ້ສ້າງແຜນການນຳ ເຂົ້າ, ຕ້ອງມີສັນຍາກັບຟາມລ້ຽງສັດ ແລະ ໄດ້ຮັບການຢັ້ງຢືນການດຸ່ນດ່ຽງການຜະລິດ ຈາກແຂວງຕົ້ນທາງນັ້ນ;
5. ພາຍຫລັງໄດ້ຮັບອະນຸມັດແຜນການນຳເຂົ້າ ສັດ ແລະ ຜະລິດຕະພັນສັດທີ່ມາຈາກຕ່າງແຂວງ ທີ່ສົ່ງເຂົ້າມາ ນະຄອນຫລວງວຽງຈັນ ຕ້ອງມີໃບອະນຸຍາດລົງພື້ນທີ່ (ສັດທີ່ນຳມາຂ້າໃນໂຮງງານ ແລະ ນຳມາລ້ຽງ), ໃບຢັ້ງ ຢືນຜົນການກວດຢາຕ້ານເຊື້ອຕົກຄ້າງໃນສັດ (ລ້ຽງແບບເປັນຟາມ) ແລະ ຜະລິດຕະພັນສັດ ແລະ ຕ້ອງມີເອ ກະສານອະນຸຍາດເຄື່ອນຍ້າຍຄົບຖ້ວນຈາກແຂວງຕົ້ນທາງ;
6. ຜູ້ຂົນສົ່ງສັດ ແລະ ຜະລິດຕະພັນສັດ ຕ້ອງນຳເອົາໃບອະນຸຍາດ ແລະ ເອກະສານຄົບຊຸດຕິດໂຕໄປພ້ອມຕະ ຫລອດເວລາການຂົນສົ່ງສັດ ແລະ ສະເໜີເອກະສານດັ່ງກ່າວ ຕໍ່ການຮ້ອງຂໍຂອງເຈົ້າໜ້າທີ່ສັດຕະວະແພດ ໃນ ການສຸ່ມກວດພາຫະນະຂົນສົ່ງ ຫລື ຕາມສະຖານທີ່ຕ່າງໆ;
7. ຫາກພົບເຫັນຜູ້ລະເມີດ, ລັກລອບຂົນສົ່ງສັດ ແລະ ຜະລິດຕະພັນສັດ ທີ່ບໍ່ຖືກຕ້ອງ, ການນຳໃຊ້ເອກະສານ ຊ້ຳຊ້ອນ, ແຫລ່ງທີ່ມາຂອງສັດບໍ່ຈະແຈ້ງ ທາງຂະແໜງຈະໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງອອກແຈ້ງການສະບັບນີ້ເພື່ອຊາບທົ່ວເຖິງກັນຢ່າງກວ້າງຂວາງ ແລະ ນຳໄປຈັດຕັ້ງໃຫ້ມີໝາກຜົນດີ.

**ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງວຽງຈັນ**

<u>ບ່ອນສົ່ງ:</u>

| | |
|---|---|
| – ຄະນະພະແນກກະສິກຳ ແລະ ປ່າໄມ້.ນວ | 1 ສະບັບ; |
| – ຫ້ອງການກະສິກຳ ແລະ ປ່າໄມ້ 9 ຕົວເມືອງລະ | 1 ສະບັບ; |
| – ຂະແໜງລ້ຽງສັດ ແລະ ການປະມົງແຂວງລະ | 1 ສະບັບ; |
| – ເກັບມ້ຽນສຳເນົາ | 1 ສະບັບ. |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

2377

ກະຊວງກະສິກຳ ແລະ ປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ປະຈຳນະຄອນຫລວງວຽງຈັນ

ເລກທີ______/ກປ.ນວ

ວັນທີ...05 JUL 2017

# ແຈ້ງການ

**ເຖິງ:** ຂະແໜງລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກຳ ແລະ ປ່າໄມ້ 9 ຕົວເມືອງ, ຜູ້ປະກອບການ, ຟາມລ້ຽງສັດ ແລະ ຟາມລ້ຽງປາ.

**ເລື່ອງ:** ການເພີ່ມທະວີ ຕິດຕາມ ກວດກາການເຄື່ອນຍ້າຍສັດ ແລະ ຊີ້ນ (ງົວ, ຄວາຍ, ໝູ, ສັດປີກ ແລະ ຜະລິດຕະພັນສັດ) ເຂົ້າ-ອອກ ນະຄອນຫລວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ), ສະບັບເລກທີ 08/ສພຊ ລົງວັນທີ 11 ພະຈິກ 2016;
- ອີງຕາມ ຄຳສັ່ງແນະນຳຂອງກະຊວງກະສິກຳ ແລະ ປ່າໄມ້, ເລກທີ 2741/ກປ, ລົງວັນທີ 23 ພຶດສະພາ 2017, ກ່ຽວກັບການຄຸ້ມຄອງ ການລ້ຽງໝູ, ການສະໜອງຊີ້ນ ແລະ ຜະລິດຕະພັນໝູ ຢູ່ ສປປ ລາວ;
- ອີງຕາມ ແຈ້ງການຂອງກົມລ້ຽງສັດ ແລະ ການປະມົງ, ເລກທີ 1068/ກລປ, ລົງວັນທີ 31 ພຶດສະພາ 2017, ເລື່ອງເພີ່ມທະວີເອົາໃຈໃສ່ ຄຸ້ມຄອງ ຕິດຕາມ ກວດກາ ການເຄື່ອນຍ້າຍ ຊີ້ນ: ງົວ, ຄວາຍ, ໝູ, ສັດປີກ ຫລື ຜະລິດຕະພັນສັດ ລະຫວ່າງແຂວງຕໍ່ແຂວງ ພາຍໃນປະເທດ;
- ອີງຕາມ ແຈ້ງການຂອງຫົວໜ້າກົມລ້ຽງສັດ ແລະ ການປະມົງ, ເລກທີ 0077/ກລປ, ລົງວັນທີ 6 ມັງກອນ 2017, ກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍສັດ, ຜະລິດຕະພັນສັດບໍ່ໃຫ້ນຳເຂົ້າຊີ້ນ: ງົວ-ຄວາຍ, ປາ, ໄກ່, ໄຂ່ໄກ່, ສັດປີກປອກ ແລະ ເປັດປອກ ເຂົ້າ-ອອກ ສປປ ລາວ.

ນະຄອນຫລວງວຽງຈັນ ມີຄວາມຕ້ອງການບໍລິໂພກອາຫານຊີ້ນມີຈຳນວນເພີ່ມຂຶ້ນແຕ່ລະປີ ແລະ ເປັນຕະຫລາດໃຫຍ່ໃນການເກັບຊື້ສັດ ແລະ ຜະລິດຕະພັນສັດ, ເຊິ່ງພາຍໃນນະຄອນຫລວງກໍ່ໄດ້ມີການລ້ຽງສັດແບບເປັນຟາມ ແລະ ແບບອຸດສາຫະກຳຫລາຍຂຶ້ນສະໜອງໃຫ້ພາຍໃນ ແລະ ມີການສົ່ງຜົນຜະລິດອອກຕ່າງແຂວງ ເປັນຕົ້ນແມ່ນແນວພັນສັດ, ປາຊີ້ນ, ໄຂ່ ແລະ ກໍ່ໄດ້ມີການນຳເຂົ້າ ໝູ, ງົວ, ຄວາຍ ແລະ ປາ ມາຈາກຕ່າງແຂວງ ໃນແຕ່ລະປີຫລາຍກວ່າ 3.500 ໂຕນ, ການເຄື່ອນຍ້າຍດັ່ງກ່າວໃນໄລຍະຜ່ານມາແມ່ນບໍ່ໄດ້ຮັບການເອົາໃຈໃສ່ ຄຸ້ມຄອງ, ຕິດຕາມ ແລະ ກວດກາດີເທົ່າທີ່ຄວນ ເຮັດໃຫ້ເກີດມີການລະບາດຂອງພະຍາດຢ່າງຕໍ່ເນື່ອງ, ບໍ່ໄດ້ຮັບການກວດຢາຕົກຄ້າງໃນສັດ ແລະ ຜະລິດຕະພັນສັດ ນອກຈາກນັ້ນ ຍັງສົ່ງຜົນກະທົບຕໍ່ການຜະລິດພາຍໃນນະຄອນຫລວງວຽງຈັນໃນບາງໄລຍະ ທັງທາງດ້ານປະລິມານທີ່ສະໜອງ ແລະ ລາຄາ ເຮັດໃຫ້ສະພາບບໍ່ເປັນປົກກະຕິ ສົ່ງຜົນໃຫ້ສັດ ແລະ ຜະລິດຕະພັນສັດພາຍໃນ